**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 188/ນຍ

ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2013

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງ ທະນາຄານ ແຫ່ງ ສປປ ລາວ, ສະບັບເລກທີ 208/ທຫລ, ລົງວັນທີ 09 ກໍລະກົດ 2013;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 271/ພນ, ລົງວັນທີ 17 ກໍລະກົດ 2013.

**ນາຍົກລັດຖະມົນຕີ ອອກດຳລັດ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ, ໜ້າທີ່, ຂອບເຂດສິດ ແລະ ລະບອບແບບແຜນວິທີການເຮັດວຽກຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຮັບຜິດຊອບໂດຍກົງ ຕໍ່ລັດຖະບານ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບໃຫ້ມີປະສິດທິພາບ, ແນໃສ່ເຮັດໃຫ້ການລະດົມທຶນ ແລະ ພັດທະນາຕະຫຼາດຫຼັກຊັບ ມີການເຄື່ອນໄຫວ ຢ່າງຕໍ່ເນື່ອງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ "ຄຄຊ" ມີຊື່ເປັນພາສາອັງກິດ ແມ່ນ "Lao Securities Commission" ຂຽນຫຍໍ້ດ້ວຍຕົວອັກສອນວ່າ "LSC" ແມ່ນການຈັດຕັ້ງຂອງລັດຖະບານ.

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກ ທາງດ້ານວຽກງານຫຼັກຊັບ ຢ່າງລວມສູນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ຄະນະກຳມະການຄຸ້ມຄອງຫຼັກຊັບມີ ໜ້າທີ່ ດັ່ງນີ້:

1. ພິຈາລະນາການສ້າງ, ການປັບປຸງ ແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຮັບຮອງແຜນງານ-ໂຄງການ, ແຜນການເຄື່ອນໄຫວ, ແຜນການປະກອບ-ກໍ່ສ້າງບຸກຄະລາກອນ ແລະ ແຜນງົບປະມານ ລວມທັງແຜນການກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບອຸປະກອນເຕັກນິກ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ຮັບຮອງເອົາການສະເໜີແຕ່ງຕັ້ງ ຮອງຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການສະເໜີ ຂອງຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ຮັບຮອງເອົາລະບຽບການ ກ່ຽວກັບວຽກງານຫຼັກຊັບ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ຮັບຮອງເອົາການອະນຸຍາດສ້າງຕັ້ງ ຫຼື ຍຸບເລີກ ສະຖາບັນ ສື່ກາງດ້ານຫຼັກຊັບ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ຮັບຮອງການອອກຈຳໜ່າຍຫຼັກຊັບ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ຄົ້ນຄ້ວາ ການສ້າງຕັ້ງ ແລະ ຍຸບເລີກ ຕະຫຼາດຫຼັກຊັບ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອນຳສະເໜີລັດຖະບານພິຈາລະນາ;
8. ຊີ້ນຳ-ນຳພາ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງໃນການໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມທາງດ້ານວຽກງານຫຼັກຊັບ; ການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນຂໍ້ມູນຂ່າວສານ ທາງດ້ານຫຼັກຊັບ ແລະ ຍາດແຍ່ງ ການຊ່ວຍເຫຼືອ ທາງດ້ານເຕັກນິກວິຊາການ;
9. ຊຸກຍູ້ ແລະ ປຸກລະດົມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປະກອບສ່ວນພັດທະນາວຽກງານຫຼັກຊັບ ໂດຍສະເພາະແມ່ນການຊຸກຍູ້ບໍລິສັດຈາກທຸກຂະແໜງການທຸລະກິດ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ;
10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນ ຕໍ່ ລັດຖະບານ ຢ່າງເປັນປົກກະຕິ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີ ຂອບເຂດສິດ ດັ່ງນີ້:

1. ອອກຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ອອກໃບອະນຸຍາດສ້າງຕັ້ງ ແລະ ຍຸບເລີກ ຕະຫຼາດຫຼັກຊັບ ບົນພື້ນຖານການເຫັນດີ ຂອງລັດຖະບານ;
3. ອອກຄຳສັ່ງ ເປີດການສືບສວນ-ສອບສວນ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ອອກຂໍ້ຕົກລົງຍ້ອງຍໍ ແລະ ນຳໃຊ້ມາດຕະການວິໄນ ຕໍ່ພະນັກງານ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ປະຕິບັດໜ້າທີ່ດີເດັ່ນ ຫຼື ລະເມີດລະບຽບກົດໝາຍ ຕາມລະບຽບການ;

5. ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 5. ໜ້າທີ່ ແລະ ຂອບເຂດສິດຂອງປະທານ**

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ມີ ໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຮັບຜິດຊອບຊີ້ນຳ-ນຳພາ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍການວາງທິດທາງ, ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງຢູ່ພາຍໃນປະເທດ, ພົວພັນຮ່ວມມືກັບຕ່າງປະເທດ ແລະ ສາກົນ;
2. ເປັນປະທານກອງປະຊຸມສາມັນ ແລະ ວິສາມັນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ເປັນຜູ້ລົງລາຍເຊັນກ່ຽວກັບເອກະສານສຳຄັນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ຮຽກປະຊຸມສາມັນ ແລະ ວິສາມັນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ລາຍງານຜົນການດຳເນີນງານໃນແຕ່ລະໄລຍະ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ຕໍ່ ລັດຖະບານ;
6. ແບ່ງຄວາມຮັບຜິດຊອບໃຫ້ ແຕ່ລະທ່ານ ໃນຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6. ໜ້າທີ່ ແລະ ຂອບເຂດສິດ ຂອງຮອງປະທານ ຜູ້ທີ່ໜຶ່ງ ຜູ້ປະຈຳການ**

ຮອງປະທານຜູ້ທີໜຶ່ງ ຜູ້ປະຈຳການ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຮັບຜິດຊອບຊີ້ນຳ-ນຳພາ ການເຄື່ອນໄຫວປະຈຳວັນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ປະຕິບັດໜ້າທີ່ແທນ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການມອບໝາຍ ຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ລົງລາຍເຊັນກ່ຽວກັບເອກະສານສຳຄັນຕາມການມອບໝາຍຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ສະເໜີຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ກ່ຽວກັບເປົ້າໝາຍ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ອອກຂໍ້ຕົກລົງແຕ່ງຕັ້ງບຸກຄະລາກອນ ຂອງສຄຄຊ ຕາມທີ່ກຳນົດໄວ້ໃນລະບຽບການສະເພາະ;
6. ສະເໜີປະທານ ຄຄຊ ເພື່ອອະນຸມັດຮຽກປະຊຸມວິສາມັນ ໃນກໍລະນີຈຳເປັນ;
7. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 7. ໂຄງປະກອບກົງຈັກ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນການຈັດຕັ້ງຂອງລັດຖະບານ ມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື “ສຄຄຊ” ເປັນກົງຈັກຊ່ວຍວຽກ ແລະ ມອບໃຫ້ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານດັ່ງກ່າວ.

**ມາດຕາ 8. ໂຄງປະກອບບຸກຄະລາກອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ — ເປັນປະທານ;
2. ຜູ້ວ່າການທະນາຄານແຫ່ງ ສປປ ລາວ — ເປັນຮອງປະທານ ຜູ້ທີ່ໜຶ່ງ, ຜູ້ປະຈຳການ;
3. ລັດຖະມົນຕີວ່າການກະຊວງການເງິນ — ເປັນຮອງປະທານ ຜູ້ທີ່ສອງ;

4. ປະທານຄະນະກຳມະການປັບປຸງທຸລະກິດ ແຫ່ງຊາດ ເປັນກຳມະການ;
5. ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
6. ລັດຖະມົນຕີຊ່ວຍວ່າການ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
7. ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ ເປັນກຳມະການ;
8. ລັດຖະມົນຕີຊ່ວຍວ່າການ ກະຊວງພາຍໃນ ເປັນກຳມະການ;
9. ຮອງປະທານກຳມາທິການ ເສດຖະກິດ, ແຜນການ ແລະ ການເງິນ ສະພາແຫ່ງຊາດ ເປັນກຳມະການ;
10. ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນກຳມະການ;
11. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ;
12. ລັດຖະມົນຕີຊ່ວຍວ່າການຫ້ອງວ່າການລັດຖະບານ ເປັນກຳມະການ;
13. ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນ ເລຂາ ຄຄຊ.

## ໝວດທີ 4
## ຫຼັກການ ແລະ ລະບອບແບບແຜນວິທີເຮັດວຽກ

### ມາດຕາ 9. ຫຼັກການ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເຄື່ອນໄຫວວຽກງານ ຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ຕົກລົງວຽກງານເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານແບ່ງງານ ໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ໂດຍຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ.

ທຸກການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

### ມາດຕາ 10. ແບບແຜນວິທີເຮັດວຽກ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ປະກອບດ້ວຍກອງປະຊຸມສາ ມັນ ແລະ ວິສາມັນ. ກອງປະຊຸມສາມັນເປີດຂຶ້ນສາມເດືອນຕໍ່ຄັ້ງ, ສ່ວນກອງປະຊຸມວິສາມັນສາມາດເປີດຂຶ້ນເວລາໃດກໍ່ໄດ້ ຖ້າມີຄວາມຈຳເປັນ ຕາມການຮຽກຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ຕາມການສະເໜີ ຂອງກຳມະການຫຼາຍກວ່າເຄິ່ງໜຶ່ງ.

ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີສະມາຊິກເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍ ຂອງສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

## ໝວດທີ 5
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

### ມາດຕາ 11. ງົບປະມານ

ງົບປະມານ ໃນການເຄື່ອນໄຫວວຽກງານ, ປະກອບວັດຖຸເຕັກນິກ, ກໍ່ສ້າງພື້ນຖານໂຄງລ່າງ ແລະ ບຳລຸງກໍ່ສ້າງບຸກຄະລາກອນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບ.

ກໍລະນີ ຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີຄວາມຈໍາເປັນ ນໍາໃຊ້ງົບປະມານ ເກີນຄວາມສາມາດ ທີ່ທະນາຄານແຫ່ງ ສປປ ລາວ ສະໜອງໃຫ້ ກະຊວງການເງິນ ຕ້ອງຮັບຜິດຊອບດຸນດ່ຽງງົບປະມານສ່ວນດັ່ງກ່າວ. ລາຍຮັບທີ່ໄດ້ຈາກການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບ ໃຫ້ເອົາເຂົ້າລາຍຮັບ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 12. ເຄື່ອງໝາຍ ແລະ ຕາປະທັບ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ມີ ເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນໍາໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ. ສ່ວນເຄື່ອງໝາຍເປັນຮູບຕົວອັກສອນສາກົນໂຕ “ L ” ມີເມັດຢູ່ລະຫວ່າງກາງຂອງຂອດລຸ່ມ ແລະ ຂອດເທິງ ແລະ ເປັນສີດໍາທັງໝົດ ຕາມດ້ວຍຕົວອັກສອນ “ a ” ເປັນສີແດງ ແລະ “ o ” ເປັນສີຟ້າ ຊຶ່ງສາມາດອ່ານອອກສຽງເປັນ “ Lao ” ແລະ ມີຕົວໜັງສືຢູ່ຂ້າງລຸ່ມ ເປັນພາສາລາວຂຽນວ່າ “ຄະນະກໍາມະການຄຸ້ມຄອງຫຼັກຊັບ” ແລະ ເປັນພາສາອັງກິດຂຽນວ່າ “ Lao Securities Commission.

ໝວດທີ 6

ບົດບັນຍັດສຸດທ້າຍ

**ມາດຕາ 13. ການຈັດຕັ້ງປະຕິບັດ**

ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາທ່ານຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 14. ຜົນສັກສິດ**

ດໍາລັດສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 051/ນຍ, ລົງວັນທີ 25 ພຶດສະພາ 2009 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ,ສະບັບເລກທີ 96/ນຍ, ລົງວັນທີ 25 ຕຸລາ 2011 ວ່າດ້ວຍການປັບປຸງໂຄງປະກອບບຸກຄະລາກອນ ຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ສະບັບເລກທີ 29/ນຍ, ລົງວັນທີ 27 ກໍລະກົດ 2012 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງສິງ ທໍາມະວົງ